**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 76 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 30 / 12 / 22

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ວ່າດ້ວຍ ການຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53;
- ອີງຕາມ ກົດໝາຍວ່າດ້ວຍ ການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 12 ແລະ ມາດຕາ 59;
- ອີງຕາມ ກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ (ສະບັບປັບປຸງ) ປີ 2016;
- ອີງຕາມ ບົດລາຍງານຂອງອົງການກວດສອບແຫ່ງລັດ ສະບັບເລກທີ 1057/ອກສລ ແລະ 1058/ອກສລ, ລົງວັນທີ 1 ທັນວາ 2022.

ຜ່ານການຮັບຟັງການລາຍງານ ຂອງອົງການກວດສອບແຫ່ງລັດ, ການຕິດຕາມກວດກາ ແລະ ການຄົ້ນຄວ້າປະກອບຄຳຄິດຄຳເຫັນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງສະມາຊິກສະພາແຫ່ງຊາດ ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX.

## ກອງປະຊຸມຕົກລົງ:

### ມາດຕາ 1 ຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານ ປະຈຳປີ 2022

ກອງປະຊຸມ ສະແດງຄວາມຊົມເຊີຍ ຕໍ່ອົງການກວດສອບແຫ່ງລັດ ທີ່ໄດ້ເອົາໃຈໃສ່ສູ້ຊົນຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2022 ຕາມພາລະບົດບາດ, ສິດ ແລະ ໜ້າທີ່ການເມືອງຂອງຕົນ ດ້ວຍຄວາມຮັບຜິດຊອບສູງ ຍາດໄດ້ຜົນສຳເລັດຫຼາຍດ້ານ ເປັນຕົ້ນ ໄດ້ຈັດຕັ້ງປະຕິບັດແຜນການກວດສອບ; ສຳເລັດການສ້າງບົດບັນທຶກປະສານງານ ກັບ ພາກສ່ວນທີ່ກ່ຽວຂ້ອງ; ສຳເລັດການສ້າງນິຕິກຳໃຕ້ກົດໝາຍ 2 ສະບັບ ແລະ ສຳເລັດໂດຍພື້ນຖານການປັບປຸງກົດໝາຍວ່າດ້ວຍການກວດສອບແຫ່ງລັດ.

ກອງປະຊຸມຮັບຮອງເອົາຜົນການເຄື່ອນໄຫວກວດສອບ ໃນປີ 2022 ດັ່ງນີ້:

**1. ຜົນການກວດສອບຄືນການຈັດຕັ້ງປະຕິບັດ ການແກ້ໄຂຜົນການກວດສອບ ຕາມມະຕິສະພາແຫ່ງຊາດເລກທີ 25/ສພຊ, ລົງວັນທີ 16 ພະຈິກ 2021**

1) ເກັບກູ້ລາຍຮັບທີ່ກວດເຫັນເພີ່ມ ຈາກການລາຍງານຂອງກະຊວງການເງິນ ຈຳນວນ 106,17 ຕື້ກີບ, ແກ້ໄຂໄດ້ ຈຳນວນ 34,57 ຕື້ກີບ, ຍັງຄ້າງ ຈຳນວນ 71,6 ຕື້ກີບ;

2) ເກັບກູ້ໜີ້ຕ້ອງຮັບສ່ວຍສາອາກອນ, ຊັບສິນຂອງລັດ ແລະ ບັນດາຫົວໜ່ວຍງົບປະມານ ສະສົມຮອດ ປີ 2020 ຈຳນວນ 5.212,61 ຕື້ກີບ; ເກັບກູ້ຄືນໄດ້ ຈຳນວນ 315,91 ຕື້ກີບ, ຍັງຄ້າງ ຈຳນວນ 4.896,70 ຕື້ກີບ;

3) ສະສາງເງິນຈ່າຍລ່ວງໜ້າໃນລະບົບຄັງເງິນແຫ່ງຊາດ ສະສົມຮອດປີ 2020 ຈຳນວນ 1.331,66 ຕື້ກີບ, ແກ້ໄຂແລ້ວ ຈຳນວນ 44,13 ຕື້ກີບ, ຍັງຄ້າງ ຈຳນວນ 1.287,53 ຕື້ກີບ;

4) ກວດກາ ແລະ ໄລ່ລຽງ ເງິນຍອດເຫຼືອ ທີ່ຈ່າຍບໍ່ໝົດ ຮອດທ້າຍປີ 2020 ຈຳນວນ 17,82 ຕື້ກີບ, ແກ້ໄຂແລ້ວ ຈຳນວນ 2,13 ຕື້ກີບ, ຍັງເຫຼືອ ຈຳນວນ 15,69 ຕື້ກີບ.

**2. ຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດ ງົບປະມານແຫ່ງລັດ ປະຈຳປີ 2021**

2.1 ກວດສອບເຫັນ ລາຍຮັບ-ລາຍຈ່າຍ ເພີ່ມຈາກການລາຍງານຂອງກະຊວງການເງິນ ທີ່ເປັນການລະເມີດວິໄນແຜນການ-ການເງິນ ດັ່ງນີ້:

- ລາຍຮັບ ຈຳນວນ 141,30 ຕື້ກີບ;
- ລາຍຈ່າຍຈຳນວນ 120,91 ຕື້ກີບ ໃນນັ້ນ: ຈ່າຍນອກແຜນ ຈຳນວນ 35,18 ຕື້ກີບ ແລະ ຈ່າຍລ່ວງໜ້າຄັງເງິນແຫ່ງຊາດ ຈຳນວນ 85,73 ຕື້ກີບ.

ກອງປະຊຸມ ມອບໃຫ້ລັດຖະບານ ໄຈ້ແຍກລາຍຮັບ-ລາຍຈ່າຍ ທີ່ກວດເຫັນເພີ່ມ ດັ່ງກ່າວ ແລະ ເກັບກູ້ຄືນມອບເຂົ້າແຜນງົບປະມານ 6 ເດືອນທ້າຍປີ 2023 ສ່ວນທີ່ຍັງບໍ່ທັນເກັບກູ້ຄືນໄດ້ ໃຫ້ກວດກາຄວາມຮັບຜິດຊອບຂອງຫົວໜ່ວຍງົບປະມານທີ່ຖືກກວດສອບ ແລະ ມີມາດຕະການແກ້ໄຂຢ່າງເຂັ້ມງວດ ແລະ ເດັດຂາດຕໍ່ຫົວໜ່ວຍງົບປະມານທີ່ລະເມີດ.

2.2 ຜົນການກວດສອບການຄຸ້ມຄອງລາຍຮັບ ຕົ້ນຕໍ ດັ່ງນີ້:

- ໜີ້ຕ້ອງຮັບສະສົມຂອງສ່ວຍສາອາກອນ, ຊັບສິນຂອງລັດ ແລະ ບັນດາຫົວໜ່ວຍງົບປະມານ ຈຳນວນ 2.430,78 ຕື້ກີບ, ໃນນັ້ນ ເກີດຂຶ້ນໃນປີ 2021 ຈຳນວນ 551,43 ຕື້ກີບ;
- ລາຍຮັບກອງທຶນຢາ ແລະ ລາຍຮັບວິຊາການ ທີ່ຄ້າງສະສາງ ແລະ ສະສົມໃນບັນຊີເງິນຝາກກົມກອງບໍລິຫານວິຊາການ ຈຳນວນ 12,71 ຕື້ກີບ;
- ກວດເຫັນການຍົກເວັ້ນພາສີ-ອາກອນ ການນຳເຂົ້ານ້ຳມັນເຊື້ອໄຟ, ເຄື່ອງໄຟຟ້າ ແລະ ເຄື່ອງກໍ່ສ້າງ ບໍ່ຖືກຕ້ອງຕາມກົດໝາຍ ຈຳນວນ 22,58 ຕື້ກີບ;
- ກວດເຫັນບັນຫາຈຳນວນໜຶ່ງທີ່ຕິດພັນກັບລາຍຮັບ ເຊັ່ນ: ຫົວໜ່ວຍງົບປະມານ ມີບັນຊີເງິນຝາກຢູ່ທະນາຄານທຸລະກິດລັດ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ສັ່ງການເອກ, ການອະນຸມັດຊຸດຄົ້ນໄມ້ທີ່ບໍ່ໄດ້ຜ່ານການຮັບຮອງຈາກລັດຖະບານ, ອະນຸຍາດໃຫ້ບໍລິສັດ ສຳປະທານດິນລັດໂດຍບໍ່ມີສັນຍາເຊົ່າ-ສຳປະທານ ແລະ ບັນຫາອື່ນໆ.

2.3 ຜົນການກວດສອບການຄຸ້ມຄອງລາຍຈ່າຍ ດັ່ງນີ້:

- ລາຍຈ່າຍເງິນລ່ວງໜ້າໃນລະບົບຄັງເງິນແຫ່ງຊາດ ຄ້າງສະສາງ ຈຳນວນ 1.379,83 ຕື້ກີບ, ໃນນັ້ນ ຄ້າງສະສາງທີ່ເກີດຂຶ້ນໃນປີ 2021 ຈຳນວນ 85,73 ຕື້ກີບ;
- ການນຳໃຊ້ເງິນຄັງ ພັດທະນາທ້ອງຖິ່ນ, ເງິນພັດທະນາຊຸມຊົນ, ເງິນລະດົມ, ເງິນເກີນແຜນ ປີ 2021 ເງິນແຮຂອງທ້ອງຖິ່ນ ແລະ ເງິນກອງທຶນຄົ້ນຄວ້າວິທະຍາສາດ ບໍ່ຖືກຕ້ອງຕາມເປົ້າໝາຍ ຈຳນວນ 78,46 ຕື້ກີບ;
- ການຈັດສັນ ແລະ ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ບໍ່ສອດຄ່ອງຕາມກົດໝາຍ ເປັນຕົ້ນ ຈັດໂຄງການລົງທຶນ ປ້ອງປົກກະຕິ ເຂົ້າເປັນໂຄງການຟື້ນຟູຫຼັງໄພພິບັດ, ໂຄງການນອກແຜນ, ການຈັດຊື້-ຈັດຈ້າງ ບໍ່ຜ່ານການປະມູນ ແລະ ສົມທຽບລາຄາ ແລະ ບັນຫາອື່ນໆ.

3. **ຜົນການກວດສອບເອກະສານລາຍງານການເງິນ ໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ 19 ເປົ້າໝາຍ ໄດ້ກວດສອບເຫັນ:** ການນຳໃຊ້ງົບປະມານ ບໍ່ໄປຕາມແຜນການ ປະຈຳປີ, ຄິດໄລ່ ແລະ ເບີກຈ່າຍເງິນບໍລິຫານໂຄງການບໍ່ໄປຕາມກຳນົດໝາຍການໃຊ້ຈ່າຍງົບປະມານຂອງລັດ, ຈັດຊື້-ຈັດຈ້າງ ແລະ ການບັນທຶກບັນຊີ ບໍ່ໄປຕາມກົດໝາຍທີ່ກ່ຽວຂ້ອງ.
4. **ຜົນການກວດສອບເອກະສານລາຍງານການເງິນ ຂອງທະນາຄານທຸລະກິດລັດ 6 ເປົ້າໝາຍ** ໄດ້ກວດສອບເຫັນ ທະນາຄານແຫ່ງ ສປປ ລາວ ອະນຸມັດ, ສືບຕໍ່ເບີກຖອນ ແລະ ປ່ອຍເງິນກູ້ໂດຍກົງໃຫ້ໂຄງການ ແລະ ວິສາຫະກິດ ຊຶ່ງບໍ່ສອດຄ່ອງ ຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ; ທະນາຄານທຸລະກິດລັດ ຈຳນວນໜຶ່ງ ມີໜີ້ບໍ່ເກີດດອກອອກຜົນ (NPLs) ເກີນອັດຕາ 3% ຂອງຍອດໜີ້ສິນໃນໃບສະຫຼຸບຊັບສິນບັດ, ປະຕິບັດລາຍຈ່າຍ ເກີນແຜນ, ອະນຸມັດສິນເຊື່ອເກີນຂອບເຂດ, ປ່ອຍສິນເຊື່ອ ໃຫ້ບໍລິສັດ ໃນເຄືອຂອງຕົນ ບໍ່ສອດຄ່ອງຕາມກົດໝາຍວ່າດ້ວຍ ທະນາຄານທຸລະກິດ ແລະ ລະບຽບການທີ່ກ່ຽວຂ້ອງ.
5. **ຜົນການກວດສອບເອກະສານລາຍງານການເງິນ ວິສາຫະກິດລັດລົງທຶນ 10 ເປົ້າໝາຍ** ໄດ້ກວດສອບເຫັນ ການນຳໃຊ້ໃບເກັບເງິນ ທີ່ບໍ່ໄດ້ຮັບອະນຸຍາດຈາກຂະແໜງສ່ວຍສາອາກອນ, ມີໜີ້ຕ້ອງຮັບເກີນກຳນົດ ແຕ່ບໍ່ໄດ້ເລັ່ງທວງ, ບັນທຶກບັນຊີລາຍຮັບ-ລາຍຈ່າຍ ບໍ່ຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນ ບັນຊີໜີ້ຕ້ອງຮັບ, ຄ່າທຳນຽມຈາລະຈອນທາງອາກາດ ແລະ ການຄຸ້ມຄອງສະໜາມບິນ, ລາຍຈ່າຍເງິນເດືອນ, ເງິນປະກັນສັງຄົມ, ການຈັດຊື້-ຈັດຈ້າງ ບໍ່ໄດ້ຜ່ານຂັ້ນຕອນການປະມູນ ຫຼື ສົມທຽບລາຄາ ແລະ ອື່ນໆ; ວິສາຫະກິດລັດ ຈຳນວນໜຶ່ງ ສ້າງລະບຽບໃຊ້ຈ່າຍບໍລິຫານພາຍໃນ ບໍ່ສອດຄ່ອງຕາມກົດໝາຍ.

## ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ກອງປະຊຸມ ຮັບຮອງເອົາ 7 ທິດທາງລວມ, 6 ຄາດໝາຍສູ້ຊົນ ແລະ 7 ວຽກຈຸດສຸມ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ດັ່ງນີ້:

1. ດຳເນີນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈຳປີ 2022 ຕາມທີ່ກຳນົດໃນ ມາດຕາ 17 ຂອງກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ;
2. ສືບຕໍ່ກວດສອບ 4 ເປົ້າໝາຍ ທີ່ຍັງບໍ່ໄດ້ຈັດຕັ້ງປະຕິບັດ ໃນປີ 2022 ເຂົ້າໃນແຜນປີ 2023 ຄື:
   1) ກວດສອບການຄຸ້ມຄອງບໍລິຫານ ກອງທຶນລຶບລ້າງຄວາມທຸກຍາກ;
   2) ກວດສອບການຄຸ້ມຄອງບໍລິຫານ ງົບປະມານຮັບໃຊ້ການຕ້ານ ແລະ ສະກັດກັ້ນ ການແຜ່ລະບາດຂອງພະຍາດໂຄວິດ-19;
   3) ກວດສອບການຄຸ້ມຄອງບໍລິຫານກອງທຶນປະກັນສັງຄົມ;
   4) ກວດສອບການຄຸ້ມຄອງບໍລິຫານກອງທຶນຄົ້ນຄວ້າວິທະຍາສາດ;
3. ກວດສອບເປົ້າໝາຍໃໝ່ ຈຳນວນ 99 ເປົ້າໝາຍ ໃນນັ້ນ:
   3.1 ອົງການກວດສອບແຫ່ງລັດ ກວດສອບ ດັ່ງນີ້:
   - ອົງການຈັດຕັ້ງລັດຂັ້ນສູນກາງ 21 ເປົ້າໝາຍ;
   - ໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ 21 ເປົ້າໝາຍ;
   - ວິສາຫະກິດລັດລົງທຶນ 11 ເປົ້າໝາຍ;
   - ທະນາຄານ 6 ເປົ້າໝາຍ;

   3.2 ອົງການກວດສອບປະຈຳພາກ ກວດສອບ ດັ່ງນີ້:
   - ອົງການກວດສອບປະຈຳພາກເໜືອ ກວດສອບ 15 ເປົ້າໝາຍ;
   - ອົງການກວດສອບປະຈຳພາກກາງ ກວດສອບ 14 ເປົ້າໝາຍ;
   - ອົງການກວດສອບປະຈຳພາກໃຕ້ ກວດສອບ 11 ເປົ້າໝາຍ.

4. ກອງປະຊຸມ ມອບໃຫ້ອົງການກວດສອບແຫ່ງລັດ ກວດສອບລົງເລິກສະເພາະ 3 ຮ່ວງລາຍຈ່າຍງົບປະມານ ປີ 2021 ແລະ 2022 ດັ່ງນີ້:
   1) ລາຍຈ່າຍລົງທຶນຂອງລັດ ບ້ວງປົກກະຕິ ໂດຍສະເພາະ ໂຄງການຊຳລະໜີ້ສິນ, ໂຄງການສືບຕໍ່ ແລະ ໂຄງການສະເໜີໃໝ່;
   2) ລາຍຈ່າຍລົງທຶນຂອງລັດບ້ວງອື່ນໆ ໂດຍສະເພາະ ກອງທຶນທາງ, ຫັນຊັບສິນເປັນທຶນ, ຈິດຮັບຈິດຈ່າຍ ແລະ ບ້ວງອື່ນໆ;
   3) ລາຍຈ່າຍຮ່ວງບໍລິຫານປົກກະຕິ ໂດຍສະເພາະ ຮ່ວງບໍລິຫານ, ດັດສົມສົ່ງເສີມ ແລະ ຈັດຊື້ຊັບສິນບັດຄົງທີ່.

5. ດຳເນີນຂັ້ນຕອນການສ້າງຕັ້ງ ອົງການກວດສອບປະຈຳພາກເໜືອ 2 ຢູ່ແຂວງອຸດົມໄຊ ແລະ ພາກກາງ 2 ຢູ່ແຂວງສະຫວັນນະເຂດ ໃຫ້ສຳເລັດ.

**ມາດຕາ 3 ຮັບຮອງເອົາມາດຕະການແນະນຳປັບປຸງແກ້ໄຂຜົນການກວດສອບ ແລະ ມາດຕະການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023**

1. **ມາດຕະການແນະນຳປັບປຸງ ແກ້ໄຂຜົນການກວດສອບ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປີ 2021**

ກອງປະຊຸມຮັບຮອງເອົາ 5 ມາດຕະການລວມ, 12 ມາດຕະການຕໍ່ກະຊວງການເງິນ; 6 ມາດຕະການຕໍ່ ກະຊວງແຜນການ ແລະ ການລົງທຶນ; 9 ມາດຕະການ ຕໍ່ທະນາຄານແຫ່ງ ສປປ ລາວ; 25 ມາດຕະການຕໍ່ບັນດາຫົວໜ່ວຍງົບປະມານ, ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ; 12 ມາດຕະການຕໍ່ວິສາຫະກິດລັດລົງທຶນ ແລະ 6 ມາດຕະການ ຕໍ່ອົງການຄຸ້ມຄອງໂຄງການເງິນກູ້ຢືມ ແລະ ຊ່ວຍເຫຼືອລ້າ ທີ່ອົງການກວດສອບແຫ່ງລັດ ໄດ້ສະເໜີຕໍ່ກອງປະຊຸມ.

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດມາດຕະການດັ່ງກ່າວ ໃຫ້ມີປະສິດທິຜົນ, ກອງປະຊຸມ ມອບໃຫ້:

1) ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ທະນາຄານແຫ່ງ ສປປ ລາວ, ຫົວໜ່ວຍງົບປະມານ ຫຼື ຫົວໜ່ວຍຖືບັນຊີ ປະສານສົມທົບກັບ ອົງການກວດສອບແຫ່ງລັດ ເອົາຂໍ້ມູນຈາກຜົນການກວດສອບ ລາຍຮັບ-ລາຍຈ່າຍ ທີ່ກວດເຫັນເພີ່ມ ໃນປີ 2021 ແລະ ໜີ້ຕ້ອງຮັບທີ່ສະສົມຜ່ານມາໄຈ້ແຍກໃຫ້ລະອຽດ ອັນໃດທີ່ສາມາດເກັບກູ້ຄືນໄດ້ ໃຫ້ເອົາເຂົ້າແຜນງົບປະມານ ປະຈຳປີ 2023 ເພື່ອສະເໜີສະພາແຫ່ງຊາດ ພິຈາລະນາເຂົ້າໃນແຜນດັດແກ້ງົບປະມານ 6 ເດືອນທ້າຍປີ ແລະ ຜົນການກວດສອບ ທີ່ສະສົມມາຫຼາຍປີ ອັນໃດບໍ່ສາມາດເກັບຄືນໄດ້ ຫຼື ບໍ່ມີຕົວຕົນ ແລ້ວໃຫ້ສະເໜີກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມຄະນະປະຈຳ ສະພາແຫ່ງຊາດ ຄັ້ງຕໍ່ໄປ ພິຈາລະນາຕາມຄວາມເໝາະສົມໂດຍສອດຄ່ອງຕາມກົດໝາຍ;
2) ມອບໃຫ້ ບັນດາຫົວໜ່ວຍງົບປະມານ, ຫົວໜ່ວຍຖືບັນຊີ ດຳເນີນມາດຕະການແກ້ໄຂຜົນການກວດສອບ ຕາມທີ່ກຳນົດໄວ້ໃນ ມາດຕາ 19 ຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ ຢ່າງເຂັ້ມງວດ.

2. **ມາດຕະການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2023**

ກອງປະຊຸມຮັບຮອງ 6 ມາດຕະການຈັດຕັ້ງປະຕິບັດວຽກງານການກວດສອບ ປະຈຳປີ 2023 ຕາມການສະເໜີ ຂອງອົງການກວດສອບແຫ່ງລັດ. ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດແຜນການ ເຄື່ອນໄຫວດັ່ງກ່າວບັນລຸຕາມຈຸດປະສົງທີ່ວາງໄວ້, ກອງປະຊຸມສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1) ມອບໃຫ້ ລັດຖະບານ:
- ໃຫ້ນາຍົກລັດຖະມົນຕີ ຊີ້ນຳ ການແກ້ໄຂຜົນການກວດສອບ ຢ່າງເດັດຂາດ ເພື່ອເກັບກູ້ຄືນລາຍຮັບທີ່ກວດສອບເຫັນເພີ່ມ ແລະ ມອບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ ຕາມມາດຕາ 6 ຂອງກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ ແລະ ຖືເອົາການແກ້ໄຂຜົນການກວດສອບ ເປັນມາດຕະຖານໃນການປະເມີນ ບຸກຄະລາກອນ ທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເລືອກຕັ້ງ ແລະ ຮັບຮອງ

ເອົາການແຕ່ງຕັ້ງ, ພ້ອມທັງລາຍງານຄະນະປະຈໍາສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເປັນແຕ່ລະໄລຍະ;

- ຊີ້ນໍາ ກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ວິເຄາະ-ວິໄຈ, ໄຈ້ແຍກ ລາຍຮັບ, ລາຍຈ່າຍ, ໜີ້ຕ້ອງຮັບ, ໜີ້ຕ້ອງສົ່ງ, ຈ່າຍລ່ວງໜ້າຄັງເງິນແຫ່ງຊາດ ທີ່ອົງການກວດສອບແຫ່ງລັດກວດສອບເຫັນໃນປີ 2022 ແລະ ສະສົມຜ່ານມາໃຫ້ລະອຽດ ອັນໃດຍັງສາມາດເກັບຄືນໄດ້ ແລະ ອັນໃດບໍ່ສາມາດເກັບຄືນໄດ້ ຫຼື ບໍ່ມີຕົວຕົນແລ້ວ ໃຫ້ລາຍງານລັດຖະບານຄົ້ນຄວ້າ ເພື່ອສະເໜີ ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ;
- ເພີ່ມງົບປະມານໃຫ້ອົງການກວດສອບແຫ່ງລັດ ຈໍານວນ 10 ຕື້ກີບ (ຕື່ມເຂົ້າໃສ່ງົບປະມານປົກກະຕິປີ 2023 ຈໍານວນ 28 ຕື້ກີບ ລວມເປັນ 38 ຕື້ກີບ) ເພື່ອນໍາໃຊ້ເຂົ້າໃນວຽກງານທີ່ຈໍາເປັນ ພ້ອມທັງສະໜອງເຄື່ອງມື, ອຸປະກອນ ເພື່ອຍົກສູງຄຸນນະພາບ, ເຕັກນິກ ແລະ ມາດຕະຖານຕ່າງໆ ຂອງວຽກງານກວດສອບ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
- ຊີ້ນໍາບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ເພີ່ມຄວາມຮັບຜິດຊອບ ໃນການຮ່ວມມື, ປະສານສົມທົບ, ອໍານວຍຄວາມສະດວກ, ສະໜອງເອກະສານ, ຂໍ້ມູນ ແລະ ເຂົ້າຮ່ວມວຽກງານກວດສອບແຫ່ງລັດ ແລະ ຕັ້ງໜ້າແກ້ໄຂຜົນການກວດສອບຕາມກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ທີ່ລັດໄດ້ວາງອອກໃຫ້ເຂັ້ມງວດ.

2) ມອບໃຫ້ ອົງການກວດສອບແຫ່ງລັດ:

- ສືບຕໍ່ແກ້ໄຂ 6 ຂໍ້ຄົງຄ້າງຕົ້ນຕໍ ທີ່ອົງການກວດສອບແຫ່ງລັດ ລາຍງານຕໍ່ກອງປະຊຸມ ພ້ອມນັ້ນ ໃຫ້ເອົາໃຈໃສ່ຜັນຂະຫຍາຍ ມະຕິກອງປະຊຸມ ສະບັບນີ້ ໃຫ້ເປັນແຜນງານ, ໂຄງການ ແລະ ກິດຈະກໍາເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ ແລະ ທັນເວລາ;
- ເອົາໃຈໃສ່ ສ້າງນັກກວດສອບໃຫ້ໄດ້ຕາມແຜນ, ທັງທາງດ້ານປະລິມານ ແລະ ຄຸນນະພາບ ໃຫ້ເປັນມືອາຊີບເທື່ອລະກ້າວ;
- ເອົາໃຈໃສ່ ຕິດຕາມກວດກາ ແລະ ຊຸກຍູ້ສົ່ງເສີມການປະຕິບັດໜ້າທີ່ວຽກງານຂອງພະນັກງານ-ນັກກວດສອບ ຢ່າງໃກ້ຊິດ ເພື່ອຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະຄົນ, ເອົາໃຈໃສ່ບໍາລຸງ ແລະ ປັບປຸງດ້ານຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ຈັນຍາບັນ, ຈັນຍາທໍາ ຂອງພະນັກງານລັດຖະກອນກວດສອບ;
- ເອົາໃຈໃສ່ຈັດຕັ້ງປະຕິບັດ ກົນໄກປະສານງານຢ່າງເປັນປົກກະຕິ ລະຫວ່າງ ອົງການກວດສອບແຫ່ງລັດ ແລະ ອົງການກວດສອບປະຈໍາພາກ; ອົງການກວດສອບແຫ່ງລັດ ກັບ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ລັດຖະບານ, ອົງການກວດກາແຫ່ງລັດ, ໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ ແລະ ບັນດາອົງການຄຸ້ມຄອງເປົ້າໝາຍກວດສອບ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີປະສິດທິພາບປະສິດທິຜົນ, ກົມກຽວ ແລະ ຄ່ອງຕົວ ເພື່ອແນໃສ່ແກ້ໄຂຜົນການກວດສອບ ໃຫ້ມີຄວາມສັກສິດ;
- ເອົາໃຈໃສ່ຫັນວຽກງານການກວດສອບໃຫ້ເປັນທັນສະໄໝ (E-Audit) ສໍາເລັດຕາມແຜນ.

3) ມອບໃຫ້ ຄະນະປະຈໍາສະພາແຫ່ງຊາດ ເປັນໃຈກາງໃນການປະສານງານ ກັບ ລັດຖະບານ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ເພື່ອປຶກສາຫາລື ກ່ຽວກັບການແກ້ໄຂຜົນການກວດສອບ ໃນແຕ່ລະໄລຍະ ຕາມຄວາມເໝາະສົມ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ອົງການກວດສອບແຫ່ງລັດ ເປັນເຈົ້າການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ລັດຖະບານຊີ້ນຳບັນດາ ກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
3. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ກຳມາທິການແຜນການ, ການເງິນ ແລະ ການກວດສອບ, ບັນດາກຳມາທິການ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຕິດຕາມກວດກາ ການຈັດຕັ້ງປະຕິບັດ ມະຕິສະບັບນີ້ ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ສະພາແຫ່ງຊາດ ... ປະທານສະພາແຫ່ງຊາດ

**ປອ ໄຊສົມພອນ ພົມວິຫານ**